ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 027 /ລອທ

ນະຄອນຫຼວງວຽງຈັນ, 09 APR 2021

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2021

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ລາວອາໂກຣເທັກ ມະຫາຊົນຄັ້ງທີ 1 ປະຈຳປີ 2021, ວັນທີ 24 ມີນາ 2021.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2021 ຊຶ່ງຈັດຂຶ້ນໃນວັນທີ 08 ເມສາ 2021 ເວລາ 14:00 ໂມງ ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ຍົກເລີກການລາອອກຈາກຕຳແໜ່ງ ຜູ້ອຳນວຍການ ຂອງທ່ານ ອຸດົມ ແກ້ວທະວົງ ແລະ ຍົກເລີກການແຕ່ງຕັ້ງ ທ່ານ ພົງຖານ ພົດຈຳນົງ ເປັນຜູ້ອຳນວຍການ.
2. ອະນຸມັດແຕ່ງຕັ້ງ ທ່ານ ພົງຖານ ພົດຈຳນົງ ເປັນຮອງອຳນວຍການ ແລະ ເປັນສະມາຊິກສະພາບໍລິຫານເພີ່ມ.
3. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ດັ່ງນີ້:
   - ກຳນົດເອົາວັນທີ 22 ເມສາ 2021 ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020, ເວລາ 15:00 ໂມງ (ລົງທະບຽນ 13:30 ໂມງ), ທີ່ໂຮງແຮມ ແລນມາກ ລິເວີໄຊ, ຊັ້ນ 4, ຫ້ອງ Diamond ບ້ານທາດຂາວ,ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

- ກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ຄື:

1. ພິຈາລະນາ ແລະ ຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019.
2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ເອກະສານລາຍງານການເງິນຂອງ ບໍລິສັດ ປະຈຳປີ 2020.
3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2021.
4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2020.
5. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບ ບັນຊີພາຍນອກ ປີ 2021.
6. ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງ ທ່ານ ພົງຖານ ພົດຈຳນົງ ເປັນຮອງຜູ້ອຳນວຍການ ແລະ ສະມາຊິກ ສະພາບໍລິຫານ.
7. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.
8. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມນັບຖືເປັນຢ່າງສູງ
ຮອງປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ນາງ ຄຳແພງ ພັດທະດາວົງ